# ປັດໃຈທີ່ເຮັດໃຫ້ກຸ່ມຜູ້ຜະລິດ ປະສົບຜົນສຳເລັດ ຫຼື ບໍ່ປະສົບຜົນສຳເລັດ: ກໍລະນີສຶກສາ ເມືອງຊຳເໜືອ , ແຂວງຫົວພັນ.



ບົດລາຍງານຜົນການສຶກສາຄົ້ນຄວ້າໃນຄັ້ງນີ້ ແມ່ນໄດ້ສຶກສາຢູ່ພາຍໃນເຂດເປົ້າໝາຍ ຂອງໂຄງການ ຢຸດຕິການຖາງປ່າເຮັດໄຮ່ ແລະ ລຶບລ້າງການປູກຝິ່ນ, ເມືອງຊຳເໜືອ ແຂວງຫົວພັນ (ADB-UNODC) ຊຶ່ງໄລຍະການຈັດຕັ້ງປະຕິບັດງານຕັ້ງແຕ່ປີ 1999-2006. ຊຶ່ງຈຸດປະສົງຫຼັກ ແມ່ນສຶກສາການປະຕິບັດງານພາຍໃນກຸ່ມ ຂອງອົງການພັດທະນາຊຸມຊົນ ແນ່ໃສ່ການຖອດຖອນບົດຮຽນຈາກປະສົບການທີ່ຜ່ານມາເປັນຕົ້ນແມ່ນ (i) ປັດໃຈທີ່ເຮັດໃຫ້ກຸ່ມເຂັ້ມແຂງ ຫຼື ອ່ອນແອໃນການຈັດຕັ້ງກຸ່ມ ແລະ (ii) ເຄືອຄ່າຍທາງສັງຄົມທີ່ມີສ່ວນໃນການພັດທະນາຊຸມຊົນຊົນນະບົດຫ່າງໄກສອກຫຼີກ.


*ບຸນຖະໜອມ ບົວຫອມ*

*ອານຸສິດ ແກ້ວໂພໄຊ*

*Jean-Christophe Castella*

*ດຣ. ລິນຄຳ ດວງສະຫວັນ*




## ❖ ຈຸດປະສົງ

- ເພື່ອຮຽນຮູ້ຈາກບົດຮຽນທີ່ໄດ້ຮັບທັງຈາກບົດຮຽນທີ່ບັນລຸຜົນ ແລະ ບົດຮຽນທີ່ຜິດພາດໃນອະດີດ ໃນການພັດທະນາກຸ່ມຊາວກະສິກອນ, ອົງການຈັດຕັ້ງພາຍໃນທ້ອງຖິ່ນ ແລະ ຮູບແບບການຈັດຕັ້ງສະຫະກອນໃນເມື່ອກ່ອນ.
- ເພື່ອເຂົ້າໃຈເຖິງເຄືອຄ່າຍທາງສັງຄົມ ທີ່ປະກອບສ່ວນເຂົ້າໃນການກຳເນີດ ແລະ ການດຳລົງຄົງຕົວຂອງກຸ່ມຊາວກະສິກອນ ຫຼັງຈາກທີ່ໂຄງການພັດທະນາສິ້ນສຸດລົງ.

## ❖ ຂອບເຂດໃນການສຶກສາ

ໃນບົດສຶກສາຄົ້ນຄວ້ານີ້ ໄດ້ໃຊ້ເວລາໄລຍະ 6 ເດືອນ ຊຶ່ງເລີ່ມຕັ້ງແຕ່ເດືອນພະຈິກ 2007 ຫາ ເດືອນເມສາ 2008. ຊຶ່ງໄດ້ເລືອກເອົາຈຳນວນ 5 ບ້ານເປົ້າໝາຍສຶກສາຄື: [ບ້ານຮາມໄຕ້, ບ້ານຫ້ວຍຄົງ, ບ້ານນາຫ້ວຍ, ບ້ານໂພນໄຊ ແລະ ບ້ານກໍາໄຮ່] ເມືອງຊຳເໜືອ, ແຂວງຫົວພັນ. ການຄັດເລືອກພື້ນທີ່ສຶກສາ ໄດ້ເລືອກເອົາພື້ນທີ່ທຳການຜະລິດກະສິກຳເຂດເນີນສູງ ເລີ່ມຈາກເຂດທີ່ຍັງມີການຖາງປ່າເຮັດໄຮ່ແບບເລື່ອນລອຍຢູ່ ໄປຈົນເຖິງ ເຂດພື້ນທີ່ເຮັດຜະລິດກະສິກຳແບບຖາວອນ ແລະ ລວມໄປເຖິງການລວບລວມຕະຫຼາດໃນເຂດເນີນສູງ. ຊຶ່ງທັງສອງມາດຖານການຄັດເລືອກພາຍໃນເຂດເນີນສູງດັ່ງກ່າວນີ້ ແມ່ນມີອິດທິພົນໃນການເຂົ້າເຖິງບ້ານ.



## ❖ ມາດຖານຈັດແບ່ງກຸ່ມເປົ້າໝາຍສຶກສາ

ອີງຕາມການວິເຄາະຂໍ້ມູນທາງສະຖິຕິ ໂດຍໄດ້ແບ່ງຄອບຄົວເປັນ 3 ກຸ່ມ:

- A - 10% - ບຸກຄົນທີ່ມີຕຳແໜ່ງໃຫ່ຍພາຍໃນບ້ານ, ເກນອາຍຸປານກາງຂອງຫົວໜ້າຄອບຄົວ (40-50 ປີ ), ເປັນຄອບຄົວໃຫ່ຍ, ມີຕຳແໜ່ງເປັນຫົວໜ້າກຸ່ມ.
- B - 69% - ສະພາບຖານະເສດຖະກິດປານກາງ ແລະ ນອກຈາກເປັນຊາວກະສິກອນ, ມີສັດລ້ຽງຈຳນວນຫຼາຍ, ເປັນສະມາຊິກກຸ່ມສິນເຊື່ອ.
- C - 21% - ເປັນຄອບຄົວທຸກຍາກ, ຫົວໜ້າຄອບຄົວຍັງໜຸ່ມນ້ອຍ (<30 ປີ) ຫຼື ເຖົ້າແກ່ (>60 ປີ) ແລະ ການເຂົ້າເປັນສະມາຊິກກຸ່ມຍັງມີໜ້ອຍ.

## ❖ ວິທີການ

- ການເກັບກຳຂໍ້ມູນພື້ນຖານທາງດ້ານປະລິມານ ແມ່ນໄດ້ເກັບເອົາທຸກຄອບຄົວພາຍໃນບ້ານ (ມີຈຳນວນ 367 ຄອບຄົວ) ທີ່ພົວພັນເຖິງຊີວິດການເປັນຢູ່ຂອງປະຊາຊົນ ແລະ ໄດ້ຄັດເລືອກເອົາ 5 ບ້ານທີ່ໄດ້ຈັດຕັ້ງປະຕິບັດກອງທຶນໝູນວຽນບ້ານ. ສຳລັບການວິເຄາະຂໍ້ມູນທາງດ້ານສະຖິຕິ ແມ່ນໄດ້ນຳໃຊ້ການທົດສອບແບບ chi-square ແລະ ການວິເຄາະກຸ່ມຕົວຢ່າງທີ່ສອດຄ້ອງ).
- ການເກັບຂໍ້ມູນທາງດ້ານຄຸນນະພາບ ໄດ້ນຳໃຊ້ແບບສອບຖາມນຳພາກສ່ວນທີ່ກ່ຽວຂ້ອງ, ເປັນກຸ່ມ ແລະ ການສັງເກດການ. ໄດ້ສຳພາດ 47 ຄອບຄົວ ໃນນັ້ນມີຫົວໜ້າກຸ່ມ 13 ຄົນ. ການຄັດເລືອກຄອບຄົວສຶກສາອີງໃສ່ການສຳຫຼວດຄັ້ງທຳອິດ ທີ່ສາມາດກຳໄດ້ເຖິງສະພາບລວມຂອງບ້ານ. ການສຳພາດແຕ່ລະຄອບຄົວ ໄດ້ສຳພາດຢູ່ແຕ່ລະເຮືອນໃຜລາວ ຊຶ່ງເປັນໂອກາດທີ່ຈະເຂົ້າໃຈເຖິງສະພາບຂອງແຕ່ລະຄອບຄົວ.

## ❖ ຜົນທີ່ໄດ້ຈາກການສຶກສາໃນຄັ້ງນີ້ :

- ການສ້າງຕັ້ງກຸ່ມໃດໜຶ່ງ ທີ່ອາໄສກິດຈະກຳພື້ນຖານ ທີ່ທາງບ້ານມີຄວາມຊຳນານ ຫຼື ເຄີຍຈັດຕັ້ງປະຕິບັດຜ່ານມາ ຈະເປັນໂອກາດທີ່ດີ ທີ່ເຮັດໃຫ້ກຸ່ມດັ່ງກ່າວນັ້ນປະສົບຜົນສຳເລັດໄດ້.
- ຄວາມຮັ່ງມີ ແລະ ຕຳແໜ່ງພາຍໃນຊຸມຊົນ ເປັນປັດໃຈຫຼັກໃນການເຂົ້າເຖິງສິນເຊື່ອ (ຈາກການທົດສອບແບບ Khi2 ທີ່ມີປະສິດຕິຜົນສູງ). ຄອບຄົວທຸກຍາກລັງເລທີ່ຈະຮັບເອົາສິນເຊື່ອ ເພາະພວກເຂົາຢ້ານບໍ່ມີຄວາມສາມາດສົ່ງເງິນຄືນໃຫ້ກຸ່ມໄດ້. ອີກດ້ານໜຶ່ງ, ທີ່ທາງຫົວໜ້າກຸ່ມ ກໍ່ກັງວົນທີ່ໃຫ້ສິນເຊື່ອແກ່ພວກເຂົາເພາະມີຄວາມສ່ຽງສູງ ທີ່ເຂົາເຈົ້າຈະບໍ່ສາມາດໃຊ້ເງິນກູ້ຄືນໃຫ້ກັບກຸ່ມໄດ້.
- ຫົວໜ້າກຸ່ມກໍ່ເປັນປັດໃຈຫຼັກ ທີ່ເຮັດໃຫ້ສະມາຊິກດຳເນີນກິດຈະກຳ ພາຍຫຼັງທີ່ໄດ້ຮັບສິນເຊື່ອ (92% ຂອງຜູ້ຕອບ). ຊຶ່ງໂດຍສ່ວນຕົວແລ້ວ ຫົວໜ້າກຸ່ມເອງຕ້ອງມີຄວາມສົນໃຈໃນກິດຈະກຳທີ່ກຸ່ມດຳເນີນຢູ່ ໂດຍການນຳໃຊ້ຄວາມຮູ້ ແລະ ທັກສະເຂົ້າໃນກິດຈະກຳນັ້ນໃຫ້ໄດ້ຮັບໝາກຜົນຂຶ້ນ.
- ການສື່ສານທີ່ດີລະຫວ່າງຫົວໜ້າກຸ່ມ ແລະ ສະມາຊິກເປັນປັດໃຈໜຶ່ງທີ່ເຮັດໃຫ້ກຸ່ມດຳເນີນໄປໄດ້ດີ. ຕາມປົກກະຕິແລ້ວ, ສະມາຊິກພາຍໃນກຸ່ມ ຈະກ່າວເຖິງຫົວໜ້າກຸ່ມ ແມ່ນເປັນປັດໃຈຫຼັກທີ່ເຮັດໃຫ້ການບໍລິຫານງານຂອງກຸ່ມປະສົບຜົນສຳເລັດ (87% ຂອງຜູ້ຕອບ). ອີກດ້ານໜຶ່ງ, ຫົວໜ້າກຸ່ມກໍ່ກ່າວເຖິງ ຄວາມໜັກແໜ້ນຂອງສະມາຊິກ ແລະ ການຜູກມັດທາງສັງຄົມພາຍໃນຊຸມຊົນ. ນອກຈາກນັ້ນ, ສະຖານະພາບຂອງຫົວໜ້າກຸ່ມ ຍັງມີຜົນຕໍ່ການບໍລິຫານງານຂອງກຸ່ມ (ອຳນາດ, ການພົວພັນ, ເຄືອຄ່າຍທາງສັງຄົມ).

## ❖ ຂໍ້ແນະນຳ ເພື່ອການຄົ້ນຄ້ວາ ແລະ ການພັດທະນາ

- ກົນໄກການຄູ້ມຄອງ ທີ່ມີຂໍ້ຂັດແຍ່ງ ຄວນຈະພັດທະນາໃນຂັ້ນເມືອງ ຫຼື ກຸ່ມບ້ານ (ໂດຍສະຫະພັນແມ່ຍິງ ຫຼື ອົງການຕ່າງໆ) ເພື່ອເປັນການຫຼີກລ່ຽງຂໍ້ຂັດແຍ່ງເລັກນ້ອຍ ອັນທີ່ຈະກາຍເປັນບັນຫາອັນໃຫຍ່ຫຼວງ ທີ່ຈະສ້າງບັນຫາໃຫ້ແກ່ປະຊາຊົນພາຍໃນຊຸມຊົນ. ບັນຫາຕ່າງໆທີ່ເກີດຂຶ້ນນັ້ນ ບໍ່ໄດ້ເກີດມາຈາກ ບັນຫາທາງດ້ານເຕັກນິກແຕ່ຢ່າງໃດ ແຕ່ແມ່ນເກີດຈາກບັນຫາທາງສັງຄົມ.
- ຄວາມອາດສາມາດຂອງຫົວໜ້າກຸ່ມພາຍໃນບ້ານ, ກຸ່ມບ້ານ ຫຼື ໃນລະດັບເມືອງ ກໍ່ຄວນມີມາດຕະການລົງໂທດຕໍ່ຜູ້ກະທຳຜິດ ເພື່ອເປັນການຫຼີກລ່ຽງຄວາມປະພຶດທີ່ບໍ່ດີ ອັນເປັນໄພຫຍໍ້ທໍ້ ຕໍ່ສະມາຊິກພາຍໃນກຸ່ມ.
- ສະນັ້ນສິ່ງສຳຄັນພາຍໃນກຸ່ມທີ່ອາດເປັນໄປໄດ້ (i) ເພື່ອເປັນການເສີມສ້າງຄວາມເຊື່ອໝັ້ນກັບກິດຈະກຳທີ່ກຳລັງດຳເນີນຢູ່, (ii) ເພື່ອເປັນພັດທະນາສາຍພົວພັນກັນທາງສັງຄົມ ເພື່ອໃຫ້ມີຄວາມໄວ້ໃຈເຮັດໃຫ້ກິດຈະກຳດັ່ງນັ້ນຈະເລີນເຕີບໂຕຂຶ້ນ, (iii) ເພື່ອເປັນການສ້າງເຄື່ອງມືການປະເມີນຜົນ ໃນໄລຍະທີ່ທາງໂຄງການຍັງດຳເນີນຢູ່ ຈົນກະທັ້ງພາຍຫຼັງຈາກທີ່ທາງໂຄງການສິ້ນສຸດລົງ ທັງນີ້ກໍ່ເປັນການຊ່ວຍໃຫ້ ການດຳເນີນງານຂອງກຸ່ມ ສາມາດຈັດສັນຄຸ້ມຄອງກັນເອງໄດ້.